COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ຕົວເລືອກການຕອບທາງອິນເຕີເນັດໃນການສຳຫຼວດພົນລະເມືອງ ປີ 2020

*ມີຄຳຖາມບໍ? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

ການສຳຫຼວດພົນລະເມືອງ ປີ 2020 ຈະນັບທຸກໆຄົນທີ່ອາໄສຢູ່ໃນປະເທດສະຫະລັດ. ການສຳຫຼວດຈັດຂຶ້ນໃນທຸກໆ 10 ປີ ແລະ ໃຊ້ງົບປະມານ 1.5 ລ້ານໂດລາ ໃນການປະຕິບັດ. ມີສອງສາມວິທີທີ່ການສຳຫຼວດພົນລະເມືອງ ປີ 2020 ທີ່ຈະແຕກຕ່າງຈາກການສຳຫຼວດພົນລະເມືອງໃນ ປີ 2010.

## ທ່ານສາມາດຕອບການສຳຫຼວດພົນລະເມືອງ ປີ 2020 ຜ່ານທາງອອນໄລ໌!

ການສຳຫຼວດພົນລະເມືອງ ປີ 2020 ຈະເປັນຄັ້ງທຳອິດທີ່ອະນຸຍາດໃຫ້ທຸກໆຄົນປ້ອນໃສ່ແບບຟອມການສຳຫຼວດພົນລະເມືອງຜ່ານທາງອອນໄລ໌. ທ່ານຈະໄດ້ຮັບຄຳເຊີນເພື່ອຕອບໃນກາງເດືອນມີນາ. ອີງຕາມວິທີໃນພື້ນທີ່ເພື່ອປ້ອນໃສ່ແບບຟອມການສຳຫຼວດພົນລະເມືອງຜ່ານທາງອອນໄລ໌, ທ່ານຈະໄດ້ຮັບໃບຂໍຮ້ອງໃຫ້ປ້ອນໃສ່ແບບຟອມການສຳຫຼວດພົນລະເມືອງຜ່ານທາງອອນໄລ໌ ຫຼື ເຊີນໃຫ້ປ້ອນໃສ່ແບບສອບຖາມທີ່ເປັນເຈ້ຍ.

ບັນດາຄອບຄົວສ່ວນຫຼາຍຈະໄດ້ຮັບຈົດໝາຍເຊີນໃຫ້ພວກເຂົາຕອບຜ່ານທາງອອນໄລ໌ໂດຍມີໝາຍເລກປະຈຳຄົວເຮືອນ ແລະ ທີ່ຢູ່ຂອງເວບໄຊທ໌ຂອງສຳນັກງານສຳຫຼວດພົນລະເມືອງຢ່າງເປັນທາງການ.

- ໃຫ້ແນ່ໃຈວ່າທ່ານໄປທີ່ເວບໄຊທ໌ທາງການຂອງການສຳຫຼວດພົນລະເມືອງ ປີ 2020
- ລະຫັດນີ້ຄວນໃຊ້ປ້ອນໃສ່ແບບຟອມການສຳຫຼວດພົນລະເມືອງຜ່ານທາງອອນໄລ໌, ຊຶ່ງເປັນບ່ອນທີ່ເຈົ້າສາມາດບອກລາຍຊື່ທຸກໆຄົນທີ່ອາໄສຢູ່ໃນທີ່ຢູ່ຂອງເຈົ້າ. ຖ້າເຈົ້າເຮັດເລກລະຫັດຂອງເຈົ້າເສຍ, ເຈົ້າຍັງສາມາດປ້ອນໃສ່ແບບຟອມການສຳຫຼວດພົນລະເມືອງຜ່ານທາງອອນໄລ໌ທີ່ຢູ່ໃນທີ່ຢູ່ຂອງທ່ານໄດ້. ທ່ານສາມາດປ້ອນໃສ່ແບບຟອມໄດ້ໂດຍໃຊ້ຄອມພິວເຕີ, ແທັບເລັດ, ຫຼື ໂທລະສັບແບບໃໝ່.
- ບຣາວເຊີຄົ້ນຫາທີ່ດີທີ່ສຸດທີ່ຈະຄົ້ນຫາຄວນນຳໃຊ້ເມື່ອຕອບຜ່ານທາງອອນໄລ໌ແມ່ນ Internet Explorer, Safari, Chrome, ຫຼື Firefox.
- ອຸປະກອນທີ່ດີທີ່ສຸດສຳລັບການຕອບຜ່ານທາງອອນໄລ໌ແມ່ນ ຄອມພິວເຕີ, ໂທລະສັບໄອໂຟນ ເວີຊັນ 5 ຂຶ້ນໄປ, ໄອແພັດທຸກເວີຊັນ ແລະ ໂທລະສັບຊັມຊຸງກາແລັກຊີ, ແລະ ແທັບເລັດ.

ຖ້າທ່ານບໍ່ສາມາດເຂົ້າອິນເຕີເນັດໄດ້, ທ່ານກໍ່ຍັງສາມາດຮ່ວມໃນການສຳຫຼວດພົນລະເມືອງ ປີ 2020 ໄດ້

- ຖ້າທ່ານບໍ່ສາມາດຕອບການສຳຫຼວດພົນລະເມືອງຜ່ານທາງອອນໄລ໌, ສຳນັກງານສຳຫຼວດພົນລະເມືອງຈະສົ່ງແບບຟອມສະບັບເຈ້ຍໜຶ່ງສະບັບໃຫ້ທ່ານໃນລະຫວ່າງການສົ່ງຈົດໝາຍຄັ້ງທີ 4 ຂອງພວກເຮົາ. ການສົ່ງຄັ້ງທີ 4 ຈະເປັນພາກສ່ວນໜຶ່ງຂອງຂະບວນການສົ່ງຄຳແນະນຳ ແລະ ຄຳເຕືອນໃຫ້ທ່ານຕອບການສຳຫຼວດ.

- ບາງຫ້ອງສະໝຸດ ແລະ ອົງການຈັດຕັ້ງຊຸມຊົນຈະຕິດຕັ້ງບັນດາຄອມພິວເຕີ, ຫຼື ແທັບເລັດທີ່ປະຊາຊົນສາມາດໄປປ້ອນຂໍ້ມູນໄດ້. ມັນຈະບໍ່ມີຂອບເຂດຈຳກັດຈຳນວນຄຳທີ່ສາມາດເຮັດໄດ້ຢູ່ໃນອຸປະກອນດຽວ.

## ການຊ່ວຍເຫຼືອທາງດ້ານພາສາສຳລັບ 12 ພາສາ ທີ່ບໍ່ແມ່ນພາສາອັງກິດຜ່ານທາງອອນໄລ໌ ແລະ ຜ່ານທາງໂທລະສັບ

*ແບບຟອມອອນໄລ໌*ມີເປັນ 12 ພາສາ ທີ່ບໍ່ແມ່ນພາສາອັງກິດ ເຊັ່ນ: ພາສາສະເປນ, ພາສາຈີນ (ພາສາຈີນກາງ), ພາສາຫວຽດນາມ, ພາສາເກົາຫຼີ, ພາສາຣັດເຊຍ, ພາສາອາຣາບິກ, ພາສາທັງກາໂລ, ພາສາໂປແລນ, ພາສາຝຣັ່ງ, ພາສາເຮຕີ, ພາສາເຊໂອເລ, ພາສາໂປຕຸກກຣີ ແລະ ພາສາຍີປຸ່ນ.

ທ່ານຍັງສາມາດໂທຫາຫ້ອງການ ເພື່ອສຳເລັດແບບຟອມການສຳຫຼວດພົນລະເມືອງຜ່ານທາງ*ໂທລະສັບ*ໄດ້, ຫຼື ຖາມຄຳຖາມ. ການຊ່ວຍເຫຼືອທາງດ້ານພາສາມີ 12 ພາສາ ທີ່ບໍ່ແມ່ນພາສາອັງກິດ ເຊັ່ນ: ພາສາສະເປນ, ພາສາຈີນ (ພາສາຈີນກາງ ແລະ ຈີນກວາງຕຸ້ງ), ພາສາຫວຽດນາມ, ພາສາເກົາຫຼີ, ພາສາຣັດເຊຍ, ພາສາອາຣາບິກ, ພາສາທັງກາໂລ, ພາສາໂປແລນ, ພາສາຝຣັ່ງ, ພາສາເຮຕີ, ພາສາເຊໂອເລ, ພາສາໂປຕຸກກຣີ ແລະ ພາສາຍີປຸ່ນ.

ແບບຟອມທີ່ເປັນເຈ້ຍມີເປັນພາສາອັງກິດ ແລະ ພາສາສະເປນ.

ຄູ່ມືພາສາ, ຊຶ່ງເປັນເຄື່ອງມືອ້າງອີງທີ່ຖືກແປທີ່ຜູ້ຄົນສາມາດໃຊ້ເພື່ອຕື່ມແບບຟອມພາສາອັງກິດຂອງພວກເຂົາ, ຄຳສັບສຳລັບ 59 ພາສາ ທີ່ບໍ່ແມ່ນພາສາອັງກິດຢູ່ໃນເວັບໄຊທ໌ຂອງສຳນັກງານສຳຫຼວດພົນລະເມືອງ www.2020census.gov/en/languages.html. ເຂົ້າເບິ່ງຂໍ້ມູນແທ້ຂອງພວກເຮົາໄດ້ທີ່ www.CountUsIn2020.org/resources ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບແບບຟອມການສຳຫຼວດພົນລະເມືອງ, ວິທີຕອບ, ແລະ ວິທີຂໍຄວາມຊ່ວຍເຫຼືອ.

## ຮັກສາຄຳຕອບຜ່ານທາງອອນໄລ໌ໃຫ້ປອດໄພ

ສຳນັກງານສຳຫຼວດພົນລະເມືອງກຳລັງເຮັດວຽກເພື່ອຮັກສາຄຳຕອບຜ່ານທາງອອນໄລ໌ຂອງທ່ານໄວ້ໃຫ້ປອດໄພ, ສຳນັກງານສຳຫຼວດພົນລະເມືອງຈະເຂົ້າໃນຂໍ້ມູນຂອງທ່ານເປັນຮູບແບບທີ່ຍາກທີ່ຈະເຂົ້າໃຈ. ສຳນັກງານສຳຫຼວດພົນລະເມືອງຈະເຂົ້າຂໍ້ມູນເປັນ 2 ຄັ້ງ. ການເຂົ້າລະຫັດຄັ້ງທຳອິດຈະເກີດຂຶ້ນເມື່ອທ່ານກົດປຸ່ມສົ່ງ, ຊຸດການເຂົ້າລະຫັດຄັ້ງທີ 2 ຈະເກີດຂຶ້ນເມື່ອຄຳຕອບມາຮອດຖານຂໍ້ມູນຂອງສຳນັກງານສຳຫຼວດພົນລະເມືອງ. ສຳນັກງານສຳຫຼວດພົນລະເມືອງຈະຕິດຕາມເພື່ອວ່າຜູ້ຫຼອກຫຼວງ, ແຮັກເກີ, ຜູ້ກະທຳທີ່ບໍ່ດີອື່ນໆບໍ່ສາມາດເຂົ້າເຖິງຄຳຕອບທີ່ຖືກສົ່ງຜ່ານແບບຟອມອອນໄລ໌ໄດ້.

ນອກຈາກນັ້ນ, ສຳນັກງານການສຳຫຼວດພົນລະເມືອງບໍ່ອະນຸຍາດໃຫ້ແບ່ງປັນຂໍ້ມູນສ່ວນຕົວຂອງທ່ານໃຫ້ຜູ້ອື່ນ, ໜ່ວຍງານຂອງລັດ, ເຈົ້າໜ້າທີ່ກວດຄົນເຂົ້າປະເທດ, ຫຼື ສາທະລະນະ. ກົດໝາຍຈະເຂັ້ມງວດໃນການປົກປ້ອງຂໍ້ມູນຂອງທ່ານຈາກການຖືກແບ່ງປັນ. ສຳນັກງານສຳຫຼວດພົນລະເມືອງຈະໃຊ້ສຳລັບຈຸດປະສົງທາງດ້ານສະຖິຕິເທົ່ານັ້ນ.

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສຳຫຼວດສຳມະໂນຄົວໄດ້ທີ່ www.CountUsIn2020.org/resources.*

# ທາງເລືອກໃນການຕອບທາງອິນເຕີເນັດສໍາລັບການສໍາຫຼວດພົນລະເມືອງ ປີ 2020

ທ່ານສາມາດຕອບການສໍາຫຼວດພົນລະເມືອງ:

- ✅ ຜ່ານທາງອອນໄລ໌ ------------------
- ✅ ຜ່ານທາງໂທລະສັບ
- ✅ ຜ່ານທາງແບບຟອມທີ່ເປັນເຈ້ຍ

ສໍານັກງານສໍາຫຼວດພົນລະເມືອງຈະສົ່ງແຈ້ງການ
ກັບເລກຄົວເຮືອນ ແລະ
ລິ້ງເວບໄຊທ໌ການສໍາຫຼວດພົນລະເມືອງ ປີ 2020
ຢ່າງເປັນທາງການໃຫ້ທ່ານ

ໄປທີ່ເວດໄຊທ໌ຢ່າງເປັນທາງການຂອ
ງການສໍາຫຼວດພົນລະເມືອງປີ
2020 ເພື່ອຕອບ

ຖ້າທ່ານເຮັດເລກປະຈໍາຕົວຄົວເຮືອນຂອງທ່ານເ
ສຍ,
ທ່ານສາມາດຕອບການສໍາຫຼວດພົນລະເມືອງໄດ້
ຜ່ານທາງອອນໄລ໌ໂດຍໃສ່ທີ່ຢູ່ຂອງທ່ານ.

ຖ້າທ່ານບໍ່ຕອບຜ່ານທາງອອນໄລ໌ ຫຼື
ຜ່ານທາງໂທລະສັບ,
ສໍານັກງານສໍາຫຼວດພົນລະເມືອງຈະສົ່ງແບບ
ຟອມທີ່ເປັນເຈ້ຍໃຫ້ທ່ານ

ເຈົ້າການຂອງສໍານັກງານສໍາຫຼວດພົນລະເມື
ອງຈະປະກອບມີເບີໂທລະສັບການສໍາຫຼວດພົ
ນລະເມືອງ ປີ 2020

ທ່ານສາມາດໂທຫາໝາຍເລກນັ້ນໄດ້ເພື່ອຕ
ອບການສໍາຫຼວດພົນລະເມືອງ

*ແນ່ໃຈວ່າລວມທັງທຸກຄົນທີ່ອາໄສໃນທີ່ຢູ່ຂອ
ງທ່ານເມື່ອປ້ອນໃສ່ແບບຟອມ!*

ການສະໜັບສະໜູນດ້ານພາສາສໍາລັບ 12 ພາສາ ທີ່ບໍ່ແມ່ນພາສາອັງກິດ
ມີຢູ່ໃນລະບົບອອນໄລ໌ ແລະ ທາງໂທລະສັບ